# ລາຍລະອຽດກ່ຽວກັບ ຫລັກສູດ ສຳລັບຜູ້ນຳຖານະປະໂລຫິດ ແລະ ຜູ້ນຳອົງການຊ່ອຍເຫລືອ

THE CHURCH OF
JESUS CHRIST
OF LATTER-DAY SAINTS

ປີ 2005 ເຖິງທ້າຍປີ 2008

## ຄຳນຳ

ເອກະສານນີ້ມີລາຍຊື່ຂອງຫລັກສູດຕ່າງໆທີ່ (1) ມີສຳລັບ ໃຊ້ຢູ່ໃນບ້ານ ແລະ (2) ບັນຈຸຕາຕະລາງເພື່ອໃຊ້ໃນໜ່ວຍຕ່າງໆຂອງສາດສະໜາຈັກ ສຳລັບປີ 2005 ເຖິງທ້າຍປີ 2008. ຄວນແຈກຢາຍເອກະສານນີ້ໃຫ້ແກ່ຜູ້ນຳຖານະປະໂລຫິດ ແລະ ຜູ້ນຳອົງການຊ່ອຍເຫລືອແຕ່ລະຄົນ. ຄວນທົບທວນເອກະສານນີ້ນຳອີກ ໃນການປະຊຸມສະພາຜູ້ນຳຂອງຫວອດ.

## ລຳດັບຫົວຂໍ້ຫລັກສູດຂອງສາດສະໜາຈັກ

ສາດສະໜາຈັກໄດ້ຈັດພິມຫລັກສູດຕ່າງໆ ເພື່ອຊ່ອຍເຫລືອສະມາຊິກ ໃຫ້ຮຽນຮູ້ ແລະ ປະຕິບັດຕາມພະກິດຕິຄຸນຂອງພະເຢຊູຄຣິດ. ພະຄຳພີ ແລະ ຄຳສອນຂອງສາດສະດາທັງຫລາຍເປັນພື້ນຖານຂອງຫລັກສູດດັ່ງກ່າວ.

ຫລັກສູດຂອງສາດສະໜາຈັກປະກອບດ້ວຍສອງປະເພດຄື: *ຫລັກສູດຂັ້ນພື້ນຖານ* ແລະ *ຫລັກສູດທົ່ວໄປ*.

*ຫລັກສູດຂັ້ນພື້ນຖານ* ມີໃຊ້ສຳລັບເຂດທີ່ສາດສະໜາຈັກຫາກໍຈັດຕັ້ງໃໝ່ ຫລືໃນເຂດທີ່ *ຫລັກສູດທົ່ວໄປ* ບໍ່ທັນມີໃນພາສາຂອງຕົນເທື່ອ. ຕາຕະລາງທີ່ສະແດງກຳນົດເວລາ ແລະ ອຸປະກອນສຳລັບ *ຫລັກສູດຂັ້ນພື້ນຖານ* ມີຢູ່ໃນໜ້າທີ 4.

*ຫລັກສູດທົ່ວໄປ* ເປັນບົດຮຽນທີ່ເພີ່ມເຕີມໃສ່ກັບ *ຫລັກສູດຂັ້ນພື້ນຖານ* ແລະ ໃຊ້ໃນເຂດທີ່ສາດສະໜາຈັກມີຄວາມໝັ້ນຄົງແລ້ວ. ຕາຕະລາງທີ່ສະແດງກຳນົດເວລາ ແລະ ອຸປະກອນການສອນສຳລັບໃຊ້ໃນ *ຫລັກສູດທົ່ວໄປ* ມີຢູ່ໃນໜ້າທີ 5.

ດ້ວຍການອະນຸຍາດຈາກສະພາອັກຄະສາວົກສິບສອງ, ຝ່າຍປະທານເຂດສາມາດຕັດສິນໃຈ ທີ່ຈະໃຊ້ *ຫລັກສູດຂັ້ນພື້ນຖານ* ໃນພາສາຂອງຕົນ ແທນ*ຫລັກສູດທົ່ວໄປ ໃນໜ່ວຍທີ່ໝັ້ນຄົງແລ້ວ ຖ້າມັນເປັນຜົນດີແກ່ສະມາຊິກ.*

## ການໄດ້ຮັບ ແລະ ການໃຊ້ຫລັກສູດອຸປະກອນການສອນ

ລະຫວ່າງຫົກເດືອນສຸດທ້າຍຂອງແຕ່ລະປີ, ໜ່ວຍຕ່າງໆຂອງສາດສະໜາຈັກ ຈະໄດ້ຮັບໜຶ່ງໃນສອງຢ່າງນີ້ (1) ໃບສັ່ງຈອງຫລັກສູດປະຈຳປີ ເພື່ອສັ່ງຈອງອຸປະກອນສຳລັບປີຕໍ່ໄປ ຫລື (2) ຫລັກສູດສຳລັບປີຕໍ່ໄປ ພ້ອມດ້ວຍໃບສັ່ງຈອງ ຖ້າວ່າຕ້ອງການສັ່ງເພີ່ມອີກ. ສະໝຽນຂອງຫວອດ ຫລືຜູ້ຊ່ອຍຂອງລາວ ສາມາດຊ່ອຍຜູ້ນຳຖານະປະໂລຫິດ ແລະ ຜູ້ນຳອົງການຊ່ອຍເຫລືອ ຂຽນໃບສັ່ງຈອງ ແລະ ຮັບອຸປະກອນທີ່ຕ້ອງການ. ຫລັກສູດຊ່ອຍເຫລືອຫລາຍໆຢ່າງ ກໍມີຢູ່ໃນຫ້ອງສະໝຸດຂອງໂບດ ເພື່ອໃຫ້ໃຊ້ດີກັນ.

ຜູ້ນຳຄວນເບິ່ງວ່າ ຄູທຸກຄົນ ໃຊ້ຫລັກສູດທີ່ໄດ້ຮັບອະນຸຍາດ. ຄູຄວນໄດ້ຮັບການຊຸກຍູ້ ໃຫ້ສອນບົດຮຽນຕາມລຳດັບທີ່ຈັດໄວ້ຢູ່ໃນປຶ້ມ.

ອຸປະກອນບາງຢ່າງ ທີ່ມີຢູ່ໃນຄຳແນະນຳນີ້ ອາດຈະບໍ່ມີໃນທຸກໆພາສາ. ຖ້າຢາກຮູ້ວ່າອຸປະກອນການສອນ ທີ່ທ່ານຕ້ອງການມີໃນພາສາໃດພາສາໜຶ່ງຫລືບໍ່, ໃຫ້ຕິດຕໍ່ຫາສູນຈຳໜ່າຍທີ່ຮັບໃຊ້ໜ່ວຍຂອງທ່ານ.

## ຫລັກສູດສຳລັບສະມາຊິກທີ່ພິການ

ຜູ້ນຳຕ້ອງບອກສະມາຊິກທີ່ພິການໃຫ້ຮູ້ວ່າ ສາດສະໜາຈັກໄດ້ດັດແປງຫລັກສູດ ເພື່ອເຮັດໃຫ້ເໝາະສົມກັບຄວາມຕ້ອງການຂອງເຂົາເຈົ້າ. ສຳລັບລາຍລະອຽດກ່ຽວກັບອຸປະກອນເຫລົ່ານີ້, ໃຫ້ເບິ່ງໃນປຶ້ມສັ່ງຊື້ອຸປະກອນຂອງສາດສະໜາຈັກ *(Church Materials Catalog)* ຫລືຕິດຕໍ່ຫາສູນຈຳໜ່າຍທີ່ຮັບໃຊ້ໜ່ວຍຂອງທ່ານ.

## ການພັດທະນາຄູ

ຜູ້ນຳຖານະປະໂລຫິດ ແລະ ຜູ້ນຳອົງການຊ່ອຍເຫລືອ ມີໜ້າທີ່ຮັບຜິດຊອບໃນຄຸນນະພາບການສອນຂອງອົງການຕົນ. ແຫລ່ງຊ່ອຍເຫລືອສຳລັບການປັບປຸງຄູໃຫ້ດີຂຶ້ນ ມີຢູ່ໃນປຶ້ມ *Improving Gospel Teaching: A Leader's Guide* (35667); *Teaching, No Greater Call* (36123); "Gospel Teaching and Leadership," ພາກທີ 16 ໃນ *Church Handbook of Instructions, Book 2* (35903); ແລະ *ຄູ່ມືການສອນ* (34595).

ຜູ້ນຳຕ້ອງແນ່ໃຈວ່າ ຄູແຕ່ລະຄົນມີປຶ້ມ *Teaching, No Greater Call* ແລະ "Gospel Teaching and Leadership" ພາກທີ 16 ໃນ *Church Handbook of Instructions.*

ຫົວໜ້າພັດທະນາຄູປະຈຳຫວອດ ກໍເປັນຜູ້ໜຶ່ງທີ່ສຳຄັນໃນການຊ່ອຍຫາວິທີການທີ່ຈະປັບປຸງການສອນ. ຫົວໜ້າພັດທະນາຄູໄດ້ຮັບໃຊ້ພາຍໃຕ້ການນຳພາຂອງຝ່າຍປະທານໂຮງຮຽນວັນອາທິດ ແຕ່ວ່າຈະທຳງານຮ່ວມກັບອົງການທັງໝົດທີ່ຢູ່ໃນຫວອດ.

## ຫລັກສູດສຳລັບບ້ານ

ສາດສະໜາຈັກໄດ້ຈັດພິມອຸປະກອນຫລາຍໆຢ່າງ ເພື່ອຊ່ອຍສະມາຊິກໃຫ້ຮຽນຮູ້, ສອນ, ແລະ ດຳລົງຊີວິດຕາມພະກິດຕິຄຸນຢູ່ໃນບ້ານ. ອຸປະກອນດັ່ງຕໍ່ໄປນີ້ ຄວນຈະມີຢູ່ໃນແຕ່ລະບ້ານ (ເມື່ອມັນມີໃນພາສາຂອງເຂົາເຈົ້າ). ຜູ້ນຳຕ້ອງພະຍາຍາມ ເພື່ອໃຫ້ແນ່ໃຈວ່າ ສະມາຊິກໃໝ່ມີອຸປະກອນເຫລົ່ານີ້.

ພະຄຳພີ

ວາລະສານຂອງສາດສະໜາຈັກ

*ຫລັກທຳພະກິດຕິຄຸນ* (31110) ຫລື *ພະກິດຕິຄຸນຂັ້ນພື້ນຖານ* (31129)

*ເພງສວດ ແລະ ເພງຂອງເດັກນ້ອຍ* (33438)

*ຄອບຄົວ: ການປະກາດຕໍ່ໂລກ* (35602)

*ພະຄິດທີ່ຊົງພະຊົນ: ປະຈັກພະຍານຂອງອັກຄະສາວົກ* (36299)

*ຄູ່ມືສຳລັບຄອບຄົວ* (31180)

*Family Home Evening Resource Book* (31106)

*ຄູ່ມືການສອນ* (34595)

ອຸປະກອນເພີ່ມເຕີມກໍມີບໍລິການນຳອີກ ເພື່ອສອນພະກິດຕິຄຸນໃນບ້ານ. ອຸປະກອນເຫລົ່ານີ້ຮວມດ້ວຍ ວີດີໂອ, ກະແຊັດສຽງ, ຮູບພາບ, ແລະ ເຄື່ອງປະຈັກຕາຕ່າງໆ, ສິ່ງຊ່ວຍໃນການສຶກສາພະຄຳພີ, ແລະ ອຸປະກອນພິມເປັນແຜ່ນສຳລັບເດັກນ້ອຍ, ຊາວໜຸ່ມ ແລະ ຜູ້ໃຫຍ່. ສຳລັບລາຍລະອຽດເພີ່ມເຕີມ, ໃຫ້ເບິ່ງປຶ້ມສັ່ງຊື້ອຸປະກອນຂອງສາດສະໜາຈັກ *(Church Materials Catalog)* ຫລືປຶ້ມສັ່ງຊື້ສິ່ງຊ່ວຍເຫລືອຄອບຄົວ *(Family Resource Catalog)*, ໃຫ້ເບິ່ງ www.ldscatalog.com ໃນອິນເຕີແນັດ, ຫລືຕິດຕໍ່ຫາສູນຈຳໜ່າຍທີ່ຮັບໃຊ້ໜ່ວຍຂອງທ່ານ. ແຫລ່ງຊ່ວຍເຫລືອຫລາຍຢ່າງ ກໍມີຢູ່ໃນ ພາກ "Home and Family" ນຳອີກ ໃນ www.lds.org.

---

## ຫລັກສູດສຳລັບໜ່ວຍຕ່າງໆຂອງສາດສະໜາຈັກ

ຫລັກສູດຂອງແຕ່ລະປີຈະເລີ່ມຕົ້ນທົ່ວໂລກ ໃນວັນທີ 1 ເດືອນມັງກອນ. ເດັກນ້ອຍ ແລະ ຊາວໜຸ່ມຈະຖືກ ຈັດເຂົ້າໃນຫ້ອງຮຽນຕາມອາຍຸ ໃນວັນທີນີ້.

### ຖານະປະໂລຫິດແຫ່ງເມນຄີເສເດັກ ແລະ ສະມາຄົມສະຕີສົງເຄາະ

ເກືອບຈະທຸກວັນອາທິດ, ຜູ້ດຳລົງຖານະປະໂລຫິດແຫ່ງເມນຄີເສເດັກ ແລະ ເອື້ອຍນ້ອງສະມາຄົມສະຕີສົງເຄາະ ຈະຮຽນບົດຮຽນດຽວກັນ ແລະ ໃຊ້ອຸປະກອນຢ່າງດຽວກັນ. ແຕ່ເຖິງຢ່າງໃດກໍຕາມ, ເຂົາເຈົ້າຈະແຍກປະຊຸມ ເປັນກຸ່ມໃຜກຸ່ມມັນ.

**ວັນອາທິດທີໜຶ່ງ.** ຜູ້ນຳຖານະປະໂລຫິດແຫ່ງເມນຄີເສເດັກຈະໃຊ້ການປະຊຸມນີ້ ເພື່ອສອນສະມາຊິກໃນກຸ່ມ ກ່ຽວກັບໜ້າທີ່ຂອງເຂົາເຈົ້າ ແລະ ຊ່ວຍເຂົາເຈົ້າໃຫ້ມີຄວາມຫ້າວຫັນກັບວຽກງານຂອງຖານະປະໂລຫິດ. ຜູ້ນຳສະມາຄົມສະຕີສົງເຄາະ ຈະໃຊ້ການປະຊຸມນີ້ ເພື່ອສອນເອື້ອຍນ້ອງທັງຫລາຍກ່ຽວກັບຈຸດປະສົງຂອງສະມາຄົມສະຕີສົງເຄາະ ແລະ ວຽກງານອັນສັກສິດຂອງອົງການ. ຫົວຂໍ້ສຳລັບການປະຊຸມນີ້ ອາດຈະຮ່ວມດ້ວຍການເຮັດໃຫ້ການແຕ່ງງານ ແລະ ຄອບຄົວເຂັ້ມແຂງຂຶ້ນ, ການສອນປະຈຳບ້ານ ແລະ ການຢ້ຽມສອນ, ການຮັບໃຊ້, ວຽກງານສອນສາດສະໜາ, ການນຳສະມາຊິກເກົ່າຄືນມາໂບດ, ການຜູກມິດ, ການດູແລສະຫວັດດີການທາງວິນຍານ ແລະ ທາງໂລກ, ແລະ ການເຮັດວຽກງານໃນພະວິຫານ ແລະ ວຽກງານການສືບປະຫວັດຄອບຄົວ. ຜູ້ນຳກຸ່ມແອວເດີ, ຜູ້ນຳກຸ່ມມະຫາປະໂລຫິດ, ແລະ ຜູ້ນຳສະມາຄົມສະຕີສົງເຄາະແຕ່ລະຄະນະ ຕ້ອງຕຽມການປະຊຸມນີ້ສຳລັບອົງການຂອງຕົນ. ຜູ້ນຳທັງຫລາຍຕ້ອງເປັນຜູ້ສອນບົດຮຽນເຫລົ່ານີ້, ຕ້ອງໃຊ້ແຫລ່ງຊ່ວຍເຫລືອຕ່າງໆ ທີ່ມີຢູ່ໃນໜ້າທີ 4 ແລະ ໃນໜ້າທີ 5. ຜູ້ນຳຄວນຕຽມການປະຊຸມນີ້ພ້ອມດ້ວຍການອະທິຖານ ເພື່ອຈະໄດ້ຮູ້ເຖິງຄວາມຕ້ອງການຂອງສະມາຊິກ ແລະ ຮູ້ວິທີທີ່ເໝາະສົມ ເພື່ອສະໜອງຄວາມຕ້ອງການຂອງເຂົາເຈົ້າ.

ການປະຊຸມຂອງກຸ່ມຕ່າງໆ ໃນວັນອາທິດຕົ້ນເດືອນ ຄວນມີເວລາເພື່ອວາງແຜນວຽກງານຮັບໃຊ້ ແລະ ວຽກງານຕ່າງໆຂອງກຸ່ມຕົນດັ່ງທີ່ເຄີຍເປັນມາ. ການປະຊຸມນີ້ຕ້ອງຮ່ວມດ້ວຍເວລາສຳລັບອົບລົມ, ສະແດງວິທີກະທຳພິທີການ, ວາງແຜນທີ່ຈະຊ່ອຍເຫລືອຄົນອື່ນ, ແບ່ງປັນວຽກງານ, ລາຍງານກ່ຽວກັບ ວຽກງານທີ່ຜ່ານມາ, ແລະຕັ້ງເປົ້າໝາຍ.

ການປະຊຸມຂອງສະມາຄົມສະຕີສົງເຄາະໃນວັນອາທິດຕົ້ນເດືອນ ຄວນຊ່ວຍໃຫ້ເອື້ອຍນ້ອງກາຍເປັນສະມາຊິກທີ່ສັດຊື່ຫລາຍຂຶ້ນ ແລະ ເປັນພັນລະຍາ, ເປັນແມ່, ເປັນລູກສາວ ແລະ ເປັນເພື່ອນບ້ານທີ່ດີກວ່າເກົ່າ. ຝ່າຍປະທານອາດຈະໃຊ້ເວລາແບ່ງປັນຄຳແນະນຳ ທີ່ໄດ້ຮັບຈາກຜູ້ນຳຖານະປະໂລຫິດ ທີ່ໄດ້ປຶກສາຫາລືກັນ ຢູ່ໃນການປະຊຸມສະຫວັດດີການຂອງຫວອດ ແລະ ໃນການປະຊຸມສະພາຜູ້ນຳຂອງຫວອດ. ເຂົາເຈົ້າອາດຈະໃຫ້ເວລາເອື້ອຍນ້ອງສະຕີ ຂຶ້ນສະແດງປະຈັກພະຍານຂອງພວກເຂົານຳອີກ.

**ວັນອາທິດທີສອງ ແລະ ທີສາມ.** ສຳລັບໜ່ວຍທີ່ໃຊ້ຫລັກສູດຂັ້ນພື້ນຖານ, ໃນວັນອາທິດທີສອງ ແລະ ທີສາມນີ້ ການສອນແມ່ນມາຈາກປຶ້ມຄູ່ມື *ໜ້າທີ່ ແລະ ພອນຂອງຖານະປະໂລຫິດ* ແລະ ຈາກ *ສະຕີສິດທິຊົນຍຸກສຸດທ້າຍ*. ສຳລັບໜ່ວຍທີ່ໃຊ້ຫລັກສູດທົ່ວໄປ, ການສອນແມ່ນມາຈາກປຶ້ມ *Teachings of Presidents of the Church* ໃນປະຈຸບັນ. ສະມາຊິກແຕ່ລະຄົນຄວນໄດ້ຮັບປຶ້ມທີ່ໃຊ້ໃນການສອນນີ້.

ຜູ້ນຳກຸ່ມແອວເດີ, ກຸ່ມມະຫາປະໂລຫິດ, ແລະ ສະມາຄົມສະຕີສົງເຄາະ ແຕ່ລະຄະນະ ຕ້ອງຕຽມການປະຊຸມນີ້ສຳລັບອົງການຂອງຕົນເອງ. ຜູ້ນຳທັງຫລາຍເຫລົ່ານີ້ ຫລືຄູຂອງກຸ່ມຕ່າງໆ ຫລືຄູຂອງສະມາຄົມສະຕີສົງເຄາະ ຄວນເປັນຄົນສອນບົດຮຽນ.

ຖ້າວ່າມີກອງປະຊຸມສະເຕກຫລືມີການປະຊຸມອື່ນໆ ໃນວັນທີ່ຕຽມສອນບົດຮຽນໃນປຶ້ມນີ້, ແລ້ວຜູ້ນຳໃນໂບດຈະເປັນຜູ້ຕັດສິນໃຈວ່າຈະສອນບົດຮຽນນີ້ໃນວັນອາທິດໃດ. ຕ້ອງສອນບົດຮຽນຕາມລຳດັບທີ່ລະບຸໄວ້ໃນປຶ້ມສອນ.

**ວັນອາທິດທີສີ່—ຄຳສອນສຳລັບວັນເວລາຂອງເຮົາ.** ສິບຫົວຂໍ້ ແລະ ອຸປະກອນສຳລັບວັນອາທິດທີສີ່ນີ້ໄດ້ ຖືກກຳນົດໄວ້ແຕ່ລະປີໂດຍຝ່າຍປະທານສູງສຸດ. ຕາມທຳມະດາແລ້ວ ຫົວຂໍ້ ແລະ ອຸປະກອນເຫລົ່ານີ້ຈະມີຢູ່ໃນວາລະສານ *Ensign* ແລະ *Liahona* ຂອງເດືອນພຶດສະພາ ແລະ ເດືອນພະຈິກ.

ຜູ້ນຳກຸ່ມແອວເດີ, ກຸ່ມມະຫາປະໂລຫິດ, ແລະ ສະມາຄົມສະຕີສົງເຄາະ ແຕ່ລະຄະນະ ຕ້ອງຕຽມການປະຊຸມນີ້ສຳລັບອົງການຂອງຕົນເອງ. ຜູ້ນຳທັງຫລາຍເຫລົ່ານີ້ ຫລືຄູຂອງກຸ່ມຕ່າງໆ ຫລືຄູຂອງສະມາຄົມສະຕີສົງເຄາະ ຄວນເປັນຄົນສອນບົດຮຽນ.

**ວັນອາທິດທີຫ້າ (ໃນເວລາທີ່ເໝາະສົມ).** ຫົວຂໍ້ສຳລັບການປະຊຸມນີ້ແມ່ນຂຶ້ນກັບຝ່າຍອະທິການ ເພື່ອໃຫ້ເໝາະສົມກັບຄວາມຕ້ອງການຂອງສະມາຊິກໃນຫວອດ. ໃນວັນອາທິດນີ້ ກຸ່ມແອວເດີ ແລະ ກຸ່ມມະຫາປະໂລຫິດ ອາດຈະຮ່ວມປະຊຸມນຳກັນ ຫລືເຂົາເຈົ້າອາດຈະຮ່ວມນຳສະມາຄົມສະຕີສົງເຄາະ.

## ຖານະປະໂລຫິດແຫ່ງອາໂລນ ແລະ ອົງການຍິງໜຸ່ມ

ຕາມທຳມະດາແລ້ວ ກຸ່ມຖານະປະໂລຫິດແຫ່ງອາໂລນ ຈະແຍກກັນເປັນກຸ່ມໃຜກຸ່ມມັນ ສຳລັບການປະຊຸມໃນວັນອາທິດ ແລະ ສຳລັບບົດຮຽນ. ແຕ່ເຖິງຢ່າງໃດກໍຕາມ, ຖ້າວ່າມີຊາຍໜຸ່ມໜ້ອຍຄົນ ໃນຖານະປະໂລຫິດແຫ່ງອາໂລນຢູ່ໃນຫວອດ, ທຸກກຸ່ມສາມາດມາປະຊຸມນຳກັນໄດ້. ນະໂຍບາຍອັນດຽວກັນນີ້ ກໍໃຊ້ໄດ້ກັບຫ້ອງຮຽນຍິງໜຸ່ມຄືກັນ.

ຢູ່ໃນໜ່ວຍທີ່ໃຊ້ຫລັກສູດຂັ້ນພື້ນຖານ, ຖ້າມີຊາຍໜຸ່ມໜ້ອຍຄົນ, ພວກເຂົາສາມາດເຂົ້າຮ່ວມປະຊຸມກັບຜູ້ດຳລົງຖານະປະໂລຫິດແຫ່ງເມນຄິເສເດັກໄດ້. ຖ້າມີຍິງໜຸ່ມໜ້ອຍຄົນ, ພວກເຂົາສາມາດເຂົ້າຮ່ວມປະຊຸມກັບສະມາຄົມສະຕີສົງເຄາະໄດ້.

ຜູ້ດຳລົງຖານະປະໂລຫິດແຫ່ງອາໂລນ ແລະ ກຸ່ມຍິງໜຸ່ມແມ່ນຖືກສອນຈາກປຶ້ມຄູ່ມືທີ່ບົ່ງໄວ້ໃນໜ້າທີ 4 ແລະ ໜ້າທີ 5. ຜູ້ນຳອາດຈະເຊີນຊາວໜຸ່ມໃຫ້ສອນບາງບົດຮຽນ. ມີແຫລ່ງຊ່ອຍເຫລືອອື່ນໆຕື່ມອີກ ເຊັ່ນປຶ້ມນ້ອຍ *For the Strength of Youth* (36550), *True to the Faith* (36863), ແລະ ວາລະສານ ຂອງສາດສະໜາຈັກ. ປຶ້ມ *New Era, Ensign,* ແລະ *Liahona* ສະບັບເດືອນພຶດສະພາ ແລະ ເດືອນພະຈິກ ມີແຫລ່ງອ້າງອີງກ່ຽວກັບຫົວຂໍ້ໜັງສືຕ່າງໆຂອງສາດສະໜາຈັກ ແລະ ອຸປະກອນອື່ນໆທີ່ສາມາດໃຊ້ ແລະ ເຮັດໃຫ້ບົດຮຽນສົມບູນຂຶ້ນ.

## ປະຖົມໄວ

ຜູ້ນຳຕ້ອງຈັດໃຫ້ເດັກນ້ອຍປະຖົມໄວເຂົ້າຫ້ອງຮຽນຕາມອາຍຸຂອງເຂົາໃນວັນທີໜຶ່ງຂອງເດືອນມັງກອນ. ຖ້າວ່າມີເດັກນ້ອຍຫລາຍພໍ, ຄວນແຍກຫ້ອງຮຽນອອກຕາມອາຍຸຂອງແຕ່ລະກຸ່ມ. ຖ້າວ່າມີຫ້ອງຮຽນ ແລະ ຄູ ຈຳກັດ, ເດັກນ້ອຍອາຍຸທີ່ຕ່າງກັນ ສາມາດຮຽນຢູ່ຫ້ອງດຽວກັນໄດ້.

ໃນໜ່ວຍທີ່ໃຊ້ຫລັກສູດທົ່ວໄປ, ຖ້າເປັນໄປໄດ້ ຄວນມີຫ້ອງຮຽນອະນຸບານສຳລັບເດັກນ້ອຍ ເມື່ອເຂົາເຖິງ 18 ເດືອນ. ການຈົດຊື່ເດັກນ້ອຍເຂົ້າຫ້ອງຮຽນນີ້ ແມ່ນຂຶ້ນກັບການເລືອກຂອງພໍ່ແມ່. ເດັກນ້ອຍຜູ້ຮອດ 2 ປີ ກ່ອນວັນທີໜຶ່ງຂອງເດືອນມັງກອນ ຈະຢູ່ໃນຫ້ອງຮຽນອະນຸບານຕໍ່ໄປຈົນຮອດທ້າຍປີ. ເດັກນ້ອຍຜູ້ຮອດ 3 ກ່ອນວັນທີໜຶ່ງຂອງເດືອນມັງກອນຈະເຂົ້າຮ່ວມກັບຫ້ອງຮຽນ Sunbeam 4 ຫລືເຂົ້າຮ່ວມກັບຫ້ອງຮຽນນຳເດັກລຸ້ນນ້ອຍກວ່າໝູ່.

ເດັກນ້ອຍຈະຖືກສອນຈາກປຶ້ມຄູ່ມືທີ່ລະບຸໄວ້ໃນຕາຕະລາງຢູ່ໜ້າທີ 4 ແລະ ໜ້າທີ 5. ແຫລ່ງຊ່ອຍເຫລືອອື່ນໆມີຢູ່ໃນວາລະສານຂອງສາດສະໜາຈັກ, ປຶ້ມຫັດອ່ານພະຄຳພີທີ່ໃຊ້ຮູບ, ຊຸດຮູບພະກິດຕິຄຸນ, ແລະ *ປຶ້ມເພງສວດ ແລະ ເພງຂອງເດັກນ້ອຍ*.

ເມື່ອເໝາະສົມ, ເດັກລຸ້ນນ້ອຍຈະເຂົ້າຮ່ວມຫ້ອງຮ່ວມກຸ່ມໃນຂະນະທີ່ເດັກລຸ້ນໃຫຍ່ເຂົ້າຫ້ອງຮຽນ. ເຄິ່ງເວລາຂອງການປະຊຸມປະຖົມໄວ, ສອງກຸ່ມນີ້ຈະປ່ຽນສະຖານທີ່ກັນ. ໃນບ່ອນທີ່ມີເດັກນ້ອຍໜ້ອຍ ສອງກຸ່ມນີ້ສາມາດຮ່ວມກັນໄດ້. ຖ້າວ່າສອງກຸ່ມນີ້ປະຊຸມແຍກກັນ, ຫ້ອງຮ່ວມກຸ່ມສຳລັບເດັກລຸ້ນໃຫຍ່ ຄວນຈະຈັດຂຶ້ນໃນເວລາດຽວກັນກັບຫ້ອງຮຽນຖານະປະໂລຫິດແຫ່ງອາໂລນ ແລະ ຫ້ອງຮຽນຍິງໜຸ່ມ.

ເດັກນ້ອຍທີ່ມີອາຍຸ 12 ປີ ໃຫ້ຢູ່ຫ້ອງຮຽນປະຖົມໄວຕໍ່ໄປຈົນຮອດເດືອນມັງກອນປີຕໍ່ມາ. ແຕ່ເຖິງຢ່າງໃດກໍຕາມ, ໃນເວລາຫ້ອງຮ່ວມກຸ່ມຂອງຊັ້ນປະຖົມໄວ ພວກເຂົາຄວນເລີ່ມໄປຫ້ອງຮຽນຖານະປະໂລຫິດແຫ່ງອາໂລນ ຫລືໄປຫ້ອງຮຽນຍິງໜຸ່ມ.

## ໂຮງຮຽນວັນອາທິດ

ໂຮງຮຽນວັນອາທິດແມ່ນສຳລັບຜູ້ໃຫຍ່ ແລະ ຊາວໜຸ່ມທີ່ມີອາຍຸ 12 ປີ ແລະ ສູງກວ່າໃນວັນທີໜຶ່ງຂອງເດືອນມັງກອນ. ເດັກນ້ອຍຜູ້ມີອາຍຸ 12 ປີ ໃຫ້ເຂົາຢູ່ໃນຫ້ອງປະຖົມໄວລະຫວ່າງເວລາໂຮງຮຽນວັນອາທິດ.

ຖ້າວ່າມີຊາວໜຸ່ມພຽງພໍ, ຄວນແຍກຫ້ອງຕາມອາຍຸຂອງແຕ່ລະກຸ່ມ. ຖ້າວ່າບໍ່ມີຊາວໜຸ່ມພຽງພໍ ຫລືຖ້າມີຫ້ອງຮຽນຫລືຄູຈຳກັດ, ຊາວໜຸ່ມອາຍຸຕ່າງກັນ ສາມາດຮ່ວມກັນໄດ້.

ຫ້ອງຮຽນຂອງໂຮງຮຽນວັນອາທິດ ແລະ ແຫລ່ງສຳລັບການສອນມີຢູ່ໃນຕາຕະລາງ ຢູ່ໜ້າທີ 4 ແລະ ໜ້າທີ 5.

## ຫ້ອງຮຽນທີ່ເລືອກໄດ້

ສຳລັບລາຍລະອຽດກ່ຽວກັບຫ້ອງຮຽນທີ່ເລືອກໄດ້, ໃຫ້ເບິ່ງຕາຕະລາງຢູ່ໜ້າທີ 4 ແລະ ໜ້າທີ 5. ຫ້ອງຮຽນເຫລົ່ານີ້ຈະຖືກຈັດຂຶ້ນພາຍໃຕ້ການນຳພາຂອງຝ່າຍອະທິການ. ມັນຈະຖືກຈັດຂຶ້ນຕາມ ເວລາທີ່ສະດວກແກ່ຜູ້ທີ່ເຂົ້າຮ່ວມ, ຫລືໃນເວລາດຽວກັນກັບ ໂຮງຮຽນວັນອາທິດ.

## ຫລັກສູດຂັ້ນພື້ນຖານສຳລັບໜ່ວຍຕ່າງໆຂອງສາດສະໜາຈັກ

(ໃຊ້ໃນໜ່ວຍທີ່ສາດສະໜາຈັກຫາກໍຈັດຕັ້ງໃໝ່ ຫລືໃຊ້ໃນໜ່ວຍທີ່ຫລັກສູດທົ່ວໄປ ຍັງບໍ່ທັນມີ.)

| ອົງການ | ປື້ມບົດຮຽນ ແລະ ແຫລ່ງຊ່ອຍເຫລືອຕ່າງໆ | 2005 | 2006 | 2007 | 2008 |
|---|---|---|---|---|---|
| ຖານະປະໂລຫິດແຫ່ງເມນຄີເສເດັກ ແລະ ສະມາຄົມສະຕີສົງເຄາະ | **ວັນອາທິດທີໜຶ່ງ**<br>ຜູ້ນຳສາມາດໃຊ້ອຸປະກອນດັ່ງຕໍ່ໄປນີ້ ເມື່ອມີໃນພາສາທີ່ຕ້ອງການ: ພະຄຳພີ; ວາລະສານຂອງສາດສະໜາຈັກ; *ຄູ່ມືສຳລັບຜູ້ນຳຖານະປະໂລຫິດ ແລະ ຜູ້ນຳອົງການຊ່ອຍເຫລືອ* (31178); *ຄູ່ມືສຳລັບຄອບຄົວ* (31180); *ຄູ່ມືການສອນ* (34595); *ໜ້າທີ່ ແລະ ພອນຂອງຖານະປະໂລຫິດ, ພາກ ກ* (31111) ແລະ *ພາກ ຂ* (31112); *ສະຕີສິດທິຊົນຍຸກສຸດທ້າຍ, ພາກ ກ* (31113) ແລະ *ພາກ ຂ* (31114); *ແລະ ຫລັກທຳພະກິດຕິຄຸນ* (31110) ຫລື *ພະກິດຕິຄຸນຂັ້ນພື້ນຖານ* (31129) | • | • | • | • |
| | **ວັນອາທິດທີສອງ ແລະ ທີສາມ**<br>*ໜ້າທີ່ ແລະ ພອນຂອງຖານະປະໂລຫິດ, ພາກ ກ* (31111)<br>ຫລື *ສະຕີສິດທິຊົນຍຸກສຸດທ້າຍ, ພາກ ກ* (31113) | • | • | | |
| | *ໜ້າທີ່ ແລະ ພອນຂອງຖານະປະໂລຫິດ, ພາກ ຂ* (31112)<br>ຫລື *ສະຕີສິດທິຊົນຍຸກສຸດທ້າຍ, ພາກ ຂ* (31114) | | | • | • |
| | **ວັນອາທິດທີສີ່**<br>ຄຳສອນສຳລັບວັນເວລາຂອງເຮົາ ກຳນົດໄວ້ໂດຍຝ່າຍປະທານສູງສຸດ<br>(ຖ້າວ່າອຸປະກອນບໍ່ມີໃນພາສາທີ່ຕ້ອງການ, ຂ່າວສານຈາກຝ່າຍປະທານສູງສຸດ ແລະ ຂ່າວສານການປະຊຸມສອນ ກໍໃຊ້ໄດ້ຄືກັນ.<br>ຂ່າວສານເຫລົ່ານີ້ໄດ້ພິມໃນວາລະສານລາຍເດືອນຂອງສາດສະໜາຈັກ ຫລືສົ່ງຕ່າງຫາກໄປໃຫ້ໜ່ວຍທີ່ບໍ່ມີວາລະສານ.) | • | • | • | • |
| | **ວັນອາທິດທີຫ້າ:** ຫົວຂໍ້ ແລະ ແຫລ່ງຕ່າງໆ ທີ່ຂຶ້ນກັບຝ່າຍປະທານສາຂາ | • | • | • | • |
| ຖານະປະໂລຫິດແຫ່ງອາໂລນ ແລະ ອົງການຍິງໜຸ່ມ | **ວັນອາທິດ ທີໜຶ່ງ, ທີສີ່, ແລະ ທີຫ້າ**<br>*ຖານະປະໂລຫິດແຫ່ງອາໂລນ 1* (34820) ຫລື *ອົງການຍິງໜຸ່ມ 1* (34823).<br>ໃຫ້ສອນບົດຮຽນຕາມລຳດັບຫລາຍກວ່າ 2 ປີ, ແລ້ວ ເລີ່ມຕົ້ນໃໝ່.[2] | • | • | • | • |
| | **ວັນອາທິດທີສອງ ແລະ ທີສາມ**<br>*ໜ້າທີ່ ແລະ ພອນຂອງຖານະປະໂລຫິດ, ພາກ ກ* (31111)<br>ຫລື *ສະຕີສິດທິຊົນຍຸກສຸດທ້າຍ, ພາກ ກ* (31113) | • | • | | |
| | *ໜ້າທີ່ ແລະ ພອນຂອງຖານະປະໂລຫິດ, ພາກ ຂ* (31112)<br>ຫລື *ສະຕີສິດທິຊົນຍຸກສຸດທ້າຍ, ພາກ ຂ* (31114) | | | • | • |
| ປະຖົມໄວ | **ອາຍຸ 3**<br>*Primary 1: I Am a Child of God* (34969) | • | • | • | • |
| | **ອາຍຸ 4–7**<br>*Primary 2: Choose the Right A* (34484) | | • | | • |
| | *ປະຖົມໄວ 3: ເລືອກສິ່ງດີ ຂ* (34499) | • | | • | |
| | **ອາຍຸ 8–11**<br>*New Testament* (34604) | • | | • | |
| | *Book of Mormon* (34594) | | • | | • |
| ໂຮງຮຽນວັນອາທິດ | **ອາຍຸ 12–ຜູ້ໃຫຍ່**<br>*ຫລັກທຳພະກິດຕິຄຸນ* (31110) ຫລື *ພະກິດຕິຄຸນຂັ້ນພື້ນຖານ* (31129).<br>ຫ້ອງຮຽນນີ້ແມ່ນສຳລັບຜູ້ສົນໃຈ ແລະ ຄົນອື່ນໆທີ່ຢາກຮຽນພະກິດຕິຄຸນຂັ້ນພື້ນຖານ. | • | • | • | • |
| | *Book of Mormon Gospel Doctrine Teacher's Manual* (35683) | | | | • |
| | *Doctrine and Covenants and Church History Gospel Doctrine Teacher's Manual* (35685) ແລະ *Our Heritage* (35448) | • | | | |
| | *Old Testament Gospel Doctrine Teacher's Manual* (35570) | | • | | |
| | *ພະຄຳພີໃໝ່–ຄູ່ມືຄຳສອນພະກິດຕິຄຸນສຳລັບຄູ* (35681) | | | • | |

| ຫ້ອງຮຽນທີ່ເລືອກໄດ້ | | | | | |
|---|---|---|---|---|---|
| ຫ້ອງຮຽນການ<br>ສອນພະກິດຕິຄຸນ | *ຄູ່ມືການສອນ* (34595)<br>(8 ອາທິດ; ເບິ່ງໜ້າທີ 29–31 ໃນ *ຄູ່ມືການສອນ* ສຳລັບ ໂຄງຮ່າງຂອງຫ້ອງຮຽນ) | • | • | • | • |
| ຫ້ອງຮຽນຄວາມ<br>ສຳພັນຂອງຄອບຄົວ<br>ແລະ ການແຕ່ງງານ | *Marriage and Family Relations Instructor's Manual* (35865)<br>*Marriage and Family Relations Participant's Study Guide* (36357)<br>(16 ອາທິດ; ສອນໂດຍຄູທີ່ໄດ້ຖືກເອີ້ນໂດຍຝ່າຍປະທານສາຂາ) | • | • | • | • |

1. ອຸປະກອນບາງຢ່າງຢູ່ໃນຕາຕະລາງນີ້ ຍັງບໍ່ທັນມີໃນທຸກພາສາ ທີ່ໃຊ້ຫລັກສູດຂັ້ນພື້ນຖານ. ຈົ່ງປ່ຽນໃຊ້ ອຸປະກອນທີ່ມີໃນປະຈຸບັນ. ໃຫ້ຕິດຕໍ່ຫາສູນຈຳໜ່າຍ ຖ້າມີຄຳຖາມກ່ຽວກັບອຸປະກອນທີ່ມີໃຫ້ໃຊ້.
2. ຖ້າວ່າປຶ້ມຄູ່ມື *ຖານະປະໂລຫິດແຫ່ງອາໂລນ 1* ແລະ *ອົງການຍິງໜຸ່ມ 1* ບໍ່ທັນມີ, ຈົ່ງໃຊ້ປຶ້ມ *ໜ້າທີ່ ແລະ ພອນຂອງຖານະປະໂລຫິດ* ແລະ *ສະຕີສິດທິຊົນຍຸກສຸດທ້າຍ* ສຳລັບບົດຮຽນໃນວັນອາທິດທີໜຶ່ງ, ທີສີ່, ແລະ ທີຫ້າ.

## ຫລັກສູດທົ່ວໆໄປສຳລັບໜ່ວຍຕ່າງໆຂອງສາດສະໜາຈັກ

(ໃຊ້ໃນເຂດທີ່ສາດສະໜາຈັກໝັ້ນຄົງແລ້ວ)

| ອົງການ | ປຶ້ມຄູ່ມື ແລະ ແຫລ່ງຊ່ອຍເຫລືອ | 2005 | 2006 | 2007 | 2008 |
|---|---|---|---|---|---|
| ຖານະປະໂລຫິດແຫ່ງເມນຄີເສເດັກ ແລະ ສະມາຄົມສະຕີສົງເຄາະ | **ວັນອາທິດທີໜຶ່ງ**<br>ຜູ້ນຳອາດຈະໃຊ້ອຸປະກອນດັ່ງຕໍ່ໄປນີ້: ພະຄຳພີ; ວາລະສານຂອງສາດສະໜາຈັກ; *Church Handbook of Instructions, Book 2* (35209), ພາກ 1, 3, 7, 8, 9, ແລະ 16; *ໜ້າທີ່ ແລະ ພອນຂອງຖານະປະໂລຫິດ, ພາກ ກ* (31111) ແລະ *ພາກ ຂ* (31112); *ສະຕີສິດທິຊົນຍຸກສຸດທ້າຍ, ພາກ ກ* (31113) ແລະ *ພາກ ຂ* (31114); *ຫລັກທຳພະກິດຕິຄຸນ* (31110); ປຶ້ມ *Worldwide Leadership Training Meeting;* ແລະ ປຶ້ມ *A Member's Guide to Temple and Family History Work* (34697) | • | • | • | • |
| | **ວັນອາທິດທີສອງ ແລະ ທີສາມ:** ປຶ້ມ *Teachings of Presidents of the Church* ທີ່ໃຊ້ໃນປະຈຸບັນ | • | • | • | • |
| | **ວັນອາທິດທີສີ່:** ຄຳສອນສຳລັບວັນເວລາຂອງເຮົາ ກຳນົດໂດຍຝ່າຍປະທານສູງສຸດ | • | • | • | • |
| | **ວັນອາທິດທີຫ້າ:** ຫົວຂໍ້ ແລະ ແຫລ່ງຕ່າງໆ ທີ່ຂຶ້ນກັບຝ່າຍອະທິການ | • | • | • | • |
| ຖານະປະໂລຫິດແຫ່ງອາໂລນ ແລະ ອົງການຍິງໜຸ່ມ | *ຖານະປະໂລຫິດແຫ່ງອາໂລນ 1* (34820) ຫລື *ອົງການຍິງໜຸ່ມ 1* (34823) | | • | | |
| | *Aaronic Priesthood 2* (34821) or Young Women 2 (34824) | | | • | |
| | *Aaronic Priesthood 3* (34822) or *Young Women 3* (34825) | • | | | • |
| ປະຖົມໄວ | **ອາຍຸ 18 ເດືອນ–3 ປີ (ຫ້ອງຮຽນອະນຸບານ ແລະ Sunbeam 4)**<br>*Primary 1: I Am a Child of God* (34969) | • | • | • | • |
| | **ອາຍຸ 4—7 (ຫ້ອງຮຽນ CTR 5, 6, 7, ແລະ 8)**<br>*Primary 2: Choose the Right A* (34484) | | • | | • |
| | *ປະຖົມໄວ 3: ເລືອກສິ່ງດີ ຂ* (34499) | • | | • | |
| | **ອາຍຸ 8—11 (ຫ້ອງຮຽນ Valiant 9, 10, 11, ແລະ 12)**<br>*Primary 4: Book of Mormon* (34594) | | | | • |
| | *Primary 5: Doctrine and Covenants and Church History* (34602) | • | | | |
| | *Primary 6: Old Testament* (34603) | | • | | |
| | *Primary 7: New Testament* (34604) | | | • | |

| | | | | | |
|---|---|---|---|---|---|
| ໂຮງຮຽນວັນອາທິດ | **ອາຍຸ 12–13**<br>*Preparing for Exaltation Teacher's Manual* (31384) | | • | | • |
| | *The Presidents of the Church Teacher's Manual* (31382) | • | | • | |
| | **ອາຍຸ 14–ຜູ້ໃຫຍ່**<br>*Book of Mormon Gospel Doctrine Teacher's Manual* (35683) | | | | • |
| | *Doctrine and Covenants and Church History Gospel Doctrine Teacher's Manual* (35685) ແລະ<br>*Our Heritage* (35448) | • | | | |
| | *Old Testament Gospel Doctrine Teacher's Manual* (35570) | | • | | |
| | *ພະຄຳພີໃໝ່–ຄູ່ມືຄຳສອນພະກິດຕິຄຸນສຳລັບຄູ* (35681) | | | • | |
| | **ອາຍຸ 14–ຜູ້ໃຫຍ່**<br>*ຫລັກທຳພະກິດຕິຄຸນ* (31110). ຫ້ອງຮຽນນີ້ແມ່ນສຳລັບຜູ້ສົນໃຈ ແລະ ຄົນອື່ນໆ<br>ທີ່ຢາກຮຽນພະກິດຕິຄຸນຂັ້ນພື້ນຖານ. | • | • | • | • |
| **ຫ້ອງຮຽນທີ່ເລືອກໄດ້** | | | | | |
| ຫ້ອງຮຽນການ<br>ສອນພະກິດຕິຄຸນ | *Teaching, No Greater Call* (36123)<br>(12 ອາທິດ; ຕາມທຳມະດາ ສອນໂດຍຫົວໜ້າພັດທະນາຄູປະຈຳຫວອດ) | • | • | • | • |
| ຫ້ອງຮຽນຄວາມ<br>ສຳພັນຂອງຄອບຄົວ<br>ແລະ ການແຕ່ງງານ | *Marriage and Family Relations Instructor's Manual* (35865)<br>*Marriage and Family Relations Participant's Study Guide* (36357)<br>(16 ອາທິດ; ສອນໂດຍຄູທີ່ໄດ້ຖືກເອີ້ນໂດຍຝ່າຍອະທິການ) | • | • | • | • |
| ຫ້ອງຮຽນປະຫວັດ<br>ສາດຄອບຄົວ | *A Member's Guide to Temple and Family History Work* (34697)<br>(ບາງອາທິດ; ຕາມທຳມະດາ ສອນໂດຍຜູ້ຊ່ຽວຊານເລື່ອງປະຫວັດສາດຄອບຄົວປະຈຳຫວອດ) | • | • | • | • |
| ຫ້ອງຮຽນຕຽມ<br>ເຂົ້າພະວິຫານ | *ການຮັບເອົາຂອງປະທານສັກສິດຈາກເບື້ອງບົນ: ການຮຽນຕຽມເຂົ້າພະວິຫານ ຄູ່ມືຄູ* (36854)<br>*ການຕຽມເຂົ້າພະວິຫານທີ່ສັກສິດ* (36793) (7 ອາທິດ) | • | • | • | • |

© 2004 ໂດຍ Intellectual Reserve, Inc. ສະຫງວນລິຂະສິດທຸກປະການ. ຈັດພິມໃນສະຫະລັດອາເມລິກາ.
ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: 8/03. ການແປໄດ້ຮັບອະນຸຍາດ: 8/03. ແປຈາກ
*Information for Priesthood and Auxiliary Leaders on Curriculum 2005 through 2008.* Laotian. 36904 331

LAOTIAN
4 02369 04331 3
36904 331